https://www.vientianetimeslao.la/%E0%BA%9A%E0%BB%8D%E0%BA%A5%E0%BA%B4%E0%BA%AA%E0%BA%B1%E0%BA%94-%E0%BB%81%E0%BA%A1%E0%BB%88%E0%BA%82%E0%BA%AD%E0%BA%87%E0%BB%80%E0%BA%9B%E0%BA%B5%E0%BA%94%E0%BB%82%E0%BA%AE%E0%BA%87%E0%BA%87%E0%BA%B2/

vientianetimeslao.la/ບໍລິສັດ-ແມ່ຂອງເປີດໂຮງງາ/




Home - ຂ່າວທັງໝົດ - ພາຍໃນປະເທດ - ບໍລິສັດ ແມ່ຂອງເປີດໂຮງງານປຸງແຕ່ງໄມ້ປູກ ຄົບວົງຈອນເພື່ອຮອງຮັບໄມ້ປູກຂອງບໍລິສັດແລ້ວ

# ບໍລິສັດ ແມ່ຂອງເປີດໂຮງງານປຸງແຕ່ງໄມ້ປູກ ຄົບວົງຈອນເພື່ອຮອງຮັບໄມ້ປູກຂອງບໍລິສັດແລ້ວ

ພາຍໃນປະເທດ

13 May 2022

2 months ago

0 171 Less than a minute

ບໍລິສັດ ແມ່ຂອງ ປູກຕົ້ນໄມ້ ຈຳກັດ ໄດ້ເປີດໂຮງງານປຸງແຕ່ງໄມ້ປູກຄົບວົງຈອນຂອງບໍລິສັດ ຢູ່ບ້ານ ດ່ານຮີ ເມືອງ ຫີນບູນ ແຂວງ ຄຳມ່ວນ ເມື່ອມໍ່ໆມານີ້ ໂດຍການເຂົ້າຮ່ວມຂອງທ່ານ ເພັດ ທອງພັດ ວົງມະນີ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, Mr. Pual Kelly ເອກອັກຄະຣາຊະທູດ Australia ປະຈຳ ສປປ ລາວ, ຕາງໜ້າບໍລິສັດ ພ້ອມທັງ ອຳນາດການປົກຄອງແຂວງ ບໍລິຄຳໄຊ ແລະ ຄຳມ່ວນ.

ໂຮງງານປຸງແຕ່ງໄມ້ດັ່ງກ່າວນີ້ສາມາດຮອງຮັບປະລິມາດໄມ້ປະມານ 150.000 ແມັດກ້ອນ ຕໍ່ປີ, ພາຍໃນໂຮງງານມີພະນັກງານກຳມະກອນ 97 ຄົນທີ່ເປັນປະຊາຊົນຢູ່ອ້ອມຂ້າງໂຮງງານ.

ບໍລິສັດ ແມ່ຂອງ ປູກຕົ້ນໄມ້ ຈຳກັດ ສ້າງຕັ້ງຂຶ້ນວັນທີ 10 ກຸມພາ 1999, ເປັນບໍລິສັດຮ່ວມທຸລະກິດປະສົມລະຫວ່າງລັດຖະບານ ສປປ ລາວ ຖືຮຸ້ນສ່ວນ 15% ແລະ ນັກລົງທຶນຕ່າງປະເທດ 85% ຊຶ່ງລັດຖະບານໄດ້ສະໜອງເນື້ອທີ່ດິນລັດໃຫ້ບໍລິສັດ ສຳປະທານໄດ້ຫຼາຍກວ່າ 23.920 ເຮັກຕາ, ໃນນີ້ຢູ່ແຂວງບໍລິຄຳໄຊ 8.978 ເຮັກຕາ ແລະ ແຂວງ ຄຳມ່ວນ 14.942 ເຮັກຕາໂດຍມີໄລຍະສຳປະທານ 50 ປີ (ຮອດປີ 2049).

ຂ່າວ-ພາບ: ກົມອຸດສາຫະກຳ ແລະ ຫັດຖະກຳ